ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເລກທີ 1066 / ກທຄວ

ນະຄອນຫຼວງວຽງຈັນ, ວັນທີ 10 ທັນວາ 2021

# ແຈ້ງການ

ເຖິງ :- ເຈົ້າໜ້າທີ່ທະບຽນວິສາຫະກິດ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ
- ເຈົ້າໜ້າທີ່ທະບຽນວິສາຫະກິດ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ

ເລື່ອງ : ການແຈ້ງຂຶ້ນ ແລະ ປ່ຽນແປງເນື້ອໃນທະບຽນວິສາຫະກິດ ຂອງຫົວໜ່ວຍວິສາຫະກິດທີ່ດຳເນີນທຸລະກິດປ້ຳນ້ຳມັນເຊື້ອໄຟ.

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ຂໍ້ຕົກລົງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ສະບັບເລກທີ 1752/ອຄ, ລົງວັນທີ 19 ກັນຍາ 2021;
- ອີງຕາມ ແຈ້ງການລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ວ່າດ້ວຍການປັບປຸງ ( ດັດສົມ ) ແລະ ການອະນຸຍາດດຳເນີນທຸລະກິດປ້ຳນ້ຳມັນເຊື້ອໄຟ ສະບັບເລກທີ 0376/ອຄ.ກຄພນ, ລົງວັນທີ 20 ພຶດສະພາ 2021;
- ອີງຕາມ ບົດບັນທຶກກອງປະຊຸມຮ່ວມ ລະຫວ່າງ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ແລະ ກົມການຄ້າພາຍໃນສະບັບລົງວັນທີ 13 ກັນຍາ 2021.

ເພື່ອຮັບປະກັນ ການຈັດຕັ້ງປະຕິບັດ ແຈ້ງການ ສະບັບເລກທີ 0376/ ອຄ.ກຄພນ, ລົງວັນທີ 20 ພຶດສະພາ 2021 ໃຫ້ເປັນເອກະພາບກັນໃນຂອບເຂດທົ່ວປະເທດ ກ່ຽວກັບການແຈ້ງຂຶ້ນ ແລະ ປ່ຽນແປງເນື້ອໃນທະບຽນວິສາຫະກິດ ຂອງຫົວໜ່ວຍວິສາຫະກິດ ທີ່ດຳເນີນທຸລະກິດປ້ຳນ້ຳມັນເຊື້ອໄຟ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ແຈ້ງມາຍັງເຈົ້າໜ້າທີ່ທະບຽນວິສາຫະກິດຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

1. ການປ່ຽນແປງເນື້ອໃນທະບຽນວິສາຫະກິດ ໃຫ້ຫົວໜ່ວຍທຸລະກິດ ປ້ຳນ້ຳມັນເຊື້ອໄຟ ຈະປະຕິບັດໄດ້ກໍຕໍ່ເມື່ອປ້ຳດັ່ງກ່າວ ນອນຢູ່ໃນ ບັນຊີເກັບກຳສະຖິຕິ ແລະ ປັບປຸງ (ດັດສົມ) ປ້ຳນ້ຳມັນເຊື້ອໄຟ ພາຍໃນແຂວງ ທີ່ໄດ້ຮັບການຢັ້ງຢືນຮັບຮອງຈາກອົງການປົກຄອງແຂວງ, ນະຄອນຫລວງວຽງຈັນ ເທົ່ານັ້ນ. ຖ້າປ້ຳນ້ຳມັນເຊື້ອໄຟດັ່ງກ່າວ ບໍ່ນອນຢູ່ໃນບັນຊີດັ່ງກ່າວຂ້າງເທິງ ຫ້າມເຈົ້າໜ້າທີ່ທະບຽນວິສາຫະກິດ ຮັບເອກະສານເພື່ອພິຈາລະນາປ່ຽນແປງເນື້ອໃນທະບຽນວິສາຫະກິດໃຫ້ເດັດຂາດ. ສຳລັບບັນຊີດັ່ງກ່າວ, ກົມການຄ້າພາຍໃນ ກໍຄືຂະແໜງການຄ້າພາຍໃນ ຈະເປັນຜູ້ສະໜອງ ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ເປັນແຕ່ລະໄລຍະ.

2. ການສະເໜີເພີ່ມປ້ຳນ້ຳມັນເຊື້ອໄຟ ທີ່ບໍລິສັດລົງທຶນເອງຂອງບໍລິສັດຈຳໜ່າຍພາຍໃນທີ່ໄດ້ຮັບໃບອະນຸຍາດດຳເນີນທຸລະກິດ ແມ່ນໃຫ້ ເຈົ້າໜ້າທີ່ທະບຽນວິສາຫະກິດເຮັດສະໂນດນຳສົ່ງ ເພື່ອຂໍການຢັ້ງຢືນເຫັນດີ ແລະ ລາຍລະອຽດກ່ຽວກັບສະຖານທີ່ຕັ້ງຂອງປ້ຳດັ່ງກ່າວຈາກຂະແໜງການຄ້າພາຍໃນກ່ອນ, ເຈົ້າໜ້າທີ່ທະບຽນວິສາຫະກິດຈຶ່ງສາມາດເພີ່ມປ້ຳດັ່ງກ່າວໃສ່ດ້ານຫລັງໃບທະບຽນວິສາຫະກິດ ໃຫ້ຜູ້ລົງທຶນຕາມການສະເໜີໄດ້;

3. ການແຈ້ງຂຶ້ນທະບຽນວິສາຫະກິດທຸລະກິດປ້ຳນ້ຳມັນເຊື້ອໄຟໃໝ່ ນັ້ນ ແມ່ນໃຫ້ປະຕິບັດຕາມຂໍ້ 8 ຂອງແຈ້ງການສະບັບເລກທີ 0376/ອຄ.ກຄພນ, ລົງວັນທີ 20 ພຶດສະພາ 2021 ຄື: " ການສະເໜີຂໍສ້າງຕັ້ງປ້ຳນ້ຳມັນເຊື້ອໄຟໃໝ່ ແມ່ນໃຫ້ປະຕິບັດຕາມແຜນພັດທະນາຕົວເມືອງບົນພື້ນຖານໄດ້ຮັບການຢັ້ງຢືນຮັບຮອງຈາກອົງການປົກຄອງແຂວງ,ນະຄອນຫຼວງວຽງຈັນ ເສຍກ່ອນ " ຈຶ່ງສາມາດຮັບເອກະສານ ຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດເພື່ອພິຈາລະນາໄດ້;

4. ການສ້າງຕັ້ງ (ຫຼື ການເພີ່ມ) ສາຂາ ຂອງຫົວໜ່ວຍວິສາຫະກິດ ທີ່ດຳເນີນທຸລະກິດນ້ຳມັນເຊື້ອໄຟ (ບໍລິສັດນຳເຂົ້າ ແລະ ສົ່ງອອກ, ບໍລິສັດຈຳໜ່າຍພາຍໃນ ທີ່ໄດ້ຮັບໃບອະນຸຍາດດຳເນີນທຸລະກິດ) ຫົວໜ່ວຍວິສາຫະກິດນັ້ນ ຕ້ອງໄດ້ຮັບອະນຸຍາດສ້າງຕັ້ງສາຂາ ຈາກກົມການຄ້າພາຍໃນກ່ອນ, ເຈົ້າໜ້າທີ່ທະບຽນວິສາຫະກິດ ຈຶ່ງສາມາດລະບຸສາຂາດັ່ງກ່າວໃສ່ດ້ານຫຼັງໃບທະບຽນວິສາຫະກິດໄດ້.

ແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຫົວໜ້າກົມ

ອະພິສິດ ແສງສຸລິວົງ



ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ, ພະແນກບໍລິການຂຶ້ນທະບຽນວິສາຫະກິດ
ເບີໂທລະສັບ : 021 412011, ເວບໄຊ໌: www.ned.moic.gov.la